ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 61 /ຫກ

ນະຄອນຫຼວງວຽງຈັນ, ວັນທີ:24 ມັງກອນ 2017

ສໍານັກງານ ຄຄຊ
ເລກທີ ...0124...
ວັນທີ 30 JAN 2017
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 02-06/01/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າ 0,37% ທຽບເງິນເອີໂຣ ພາຍຫຼັງມີການລາຍງານຕົວເລກອັດຕາເງິນເຟີ້ຂອງຂົງເຂດເອີຣົບເພີ່ມຂຶ້ນມາຢູ່ທີ່ລະດັບ 1,1% ໃນເດືອນ 12/2016 ບວກກັບຕົວເລກການຈ້າງງານພາກເອກະຊົນຂອງສະຫະລັດກໍ່ປັບຕົວເພີ່ມຂຶ້ນພຽງແຕ່ 153.000 ຄົນ ຊຶ່ງເປັນຕົວເລກຕໍ່າກວ່ານັກວິເຄາະຄາດການໄວ້ທີ່ 170.000 ຄົນ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 26-30/12/2016 | ອາທິດນີ້ 2-6/01/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0559 | 1,0598 | -0,37% |
| ໂດລາ/ເຢນ | 116,95 | 115,96 | 0,85% |
| ໂດລາ/ບາດ | 35,800 | 35,680 | 0,34% |
| ໂດລາ/ເປໂຊ | 49,50 | 49,33 | 0,34% |
| ໂດລາ/ຣູເປຍ | 13.470,00 | 13.360,00 | 0,82% |
| ໂດລາ/ໂດລາສິງກະໂປ | 1,4452 | 1,4336 | 0,81% |
| ໂດລາ/ຢວນ | 6,9465 | 6,9244 | 0,32% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນຫຼຸດລົງ 4,83% ເປັນ 53,96 ໂດລາ/ບາເຣວ ເນື່ອງຈາກດັດຊະນີຂອງຄ່າເງິນໂດລາສະຫະລັດ (U.S. Dollar Index) ມີການປັບຕົວຂຶ້ນສູງ ບວກກັບການລາຍງານຕົວເລກທາງເສດຖະກິດຂອງສະຫະລັດທີ່ອອກມາດີ ສິ່ງຜົນໃຫ້ນັກລົງທຶນທີ່ຖືຄອງສັນຍານ້ຳມັນດິບມີການເທຂາຍເພື່ອເກັງກຳໄລ. ສ່ວນລາຄາຄຳເພີ່ມຂຶ້ນ 1,66% ເປັນ1.178,36ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,16% ທຽບໃສ່ເງິນໂດລາ ແລະ ແຂງຄ່າຂຶ້ນ 0,11% ເມື່ອທຽບໃສ່ເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,77% ທຽບໃສ່ເງິນໂດລາ ແລະ ອ່ອນຄ່າ 2,42% ທຽບໃສ່ເງິນບາດ.

| ອັດຕາ | ອາທິດຜ່ານມາ 26-30/12/2016 | | | ອາທິດນີ້ 2-6/1/2017 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.312,00 | 8.353,67 | 8.337,81 | 8.302,40 | 8.351,50 | 8.324,35 | 0,12% | 0,03% | 0,16% | -1,82% | -1,72% | -1,77% |
| ບາດ | 233,12 | 235,08 | 234,53 | 232,87 | 234,77 | 234,27 | 0,11% | 0,13% | 0,11% | -2,23% | -2,47% | -2,42% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,10% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 2,65%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,19% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,46%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (30/12/2016-05/01/2017) ເຫັນວ່າ ທທກ ຊື້-ຂາຍໂດລາສຸດທິ 17,35 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 29,18 ລ້ານໂດລາ ແລະ ຂາຍໂດລາໄດ້ 11,83 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 661,66 ລ້ານບາດ (ໃນນີ້ ຊື້ບາດໄດ້ 163,60 ລ້ານບາດ ແລະ ຂາຍບາດໄດ້ 825,26 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາຫຼຸດລົງ 68,37% ແລະ ຫຼຸດລົງ 64,15% ສຳລັບເງິນບາດ.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 4,55 ລ້ານໂດລາ ແລະ ສ່ວນສະກຸນເງິນບາດແມ່ນບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 0,70 ລ້ານໂດລາສະຫະລັດ ແລະ ເງິນບາດ 30 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ພາຍໃນອາທິດແມ່ນຊື້-ຂາຍເງິນສະກຸນເງິນໂດລາສະຫະລັດ 0,06 ລ້ານໂດລາ, ສ່ວນສະກຸນເງິນບາດແມ່ນບໍ່ມີການຊື້-ຂາຍ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

## ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 23-29/12/2016 | | ອາທິດທີ 30/12/2016-05/1/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **87,49** | **284,71** | **29,18** | **163,60** | **-66,65%** | **-42,54%** |
| - ທ/ຄທຸລະກິດລັດ | 9,66 | 129,48 | 2,36 | 11,08 | -75,57% | -91,44% |
| - ທ/ຄທຸລະກິດອື່ນໆ | 77,83 | 155,23 | 26,82 | 152,52 | -65,54% | -1,75% |
| 2. ການຂາຍເງິນຕາຕ່າງປະເທດ | **42,16** | **2.473,95** | **11,83** | **825,26** | **-71,94%** | **-66,64%** |
| - ທ/ຄທຸລະກິດລັດ | 9,82 | 179,40 | 1,36 | 61,62 | -86,15% | -65,65% |
| - ທ/ຄທຸລະກິດອື່ນໆ | 32,34 | 2.294,55 | 10,47 | 763,64 | -67,63% | -66,72% |
| ຊື້-ຂາຍສຸດທິ ທທກ | **45,33** | **-2.189,24** | **17,35** | **-661,66** | -61,73% | **-69,78%** |
| - ຜິດດ່ຽງ ຊື້-ຂາຍ | 51,81% | -768,94% | 59,46% | -404,4% | 14,76% | -47,40% |
| - ມູນຄ່າການຊື້-ຂາຍ | **129,65** | **2.758,66** | **41,01** | **988,86** | -68,37% | **-64,15%** |
| 3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | **-16,96** | **-49,50** | **4,55** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 6,15 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 16,96 | 49,50 | 1,60 | 0,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **4,24** | **20,80** | **0,70** | **30,00** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **-4,99** | **0,00** | **0,06** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,01 | 0,00 | 0,06 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 5,00 | 0,00 | 0,00 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 12/2016 ຄາດວ່າຈະເພີ່ມຂຶ້ນຢູ່ໃນລະດັບ 2,49% (ຕົວເລກຄາດຄະເນ) ຈາກ 2,09% ໃນເດືອນ 11/2016.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 69,35 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 48,9% ທຽບໃສ່ອາທິດຜ່ານມາ.

3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 465 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 717 ສະບັບ ເທົ່າກັບ 60,65% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 215,26 ຕື້ກີບ ຫຼຸດລົງ 364,71 ຕື້ກີບ ເທົ່າກັບ 62,88% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (30/12/2016-06/01/2017) ມີຈຳນວນ 1.465 ຄັ້ງ ລວມມູນຄ່າໃນໂອນທັງໝົດ 352,83 ຕື້ກີບ ທຽບໃສ່ອາທິດຜ່ານມາຫຼຸດລົງຈາກ 603,05 ຕື້ກີບ ເທົ່າກັບ 63,08%;

**ກະຊວງການເງິນ**: ພາຍໃນອາທິດນີ້ແມ່ນບໍ່ມີການເຄື່ອນໄຫວ.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ຕະຫຼອດດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.142,56 ຈຸດ ເພີ່ມຂຶ້ນ 12,64% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 133.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 669 ລ້ານກີບ

ເພີ່ມຂຶ້ນ 33,11% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 59,10% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ (26-30/12/2016) | ດັດຊະນີອາທິດທີ (2-6/1/2017) | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | **1.013,55** | **1.142,56** | **59,10%** | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 66.600 | 359.005.000 | 5.390 | 54.100 | 324.000.000 | 5.989 | -18,77 | -9,75 | 598 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 128.100 | 640.390.000 | 4.999 | 51.700 | 276.060.000 | 5.340 | -59,64 | -56,89 | 341 |
| ບໍລິສັດລາວເວີນ ມະຫາຊົນ | 0 | 0 | 5.900 | 0 | 0 | 5.900 | - | - | - |
| ບໍລິສັດປີໂຕລ້ຽມເທຣດດິ້ງລາວ ມະຫາຊົນ | 0 | 0 | - | 23.400 | 57.330.000 | 2.450 | - | - | -50 |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 300 | 810.000 | 3.000 | 4.300 | 11.610.000 | 2.700 | 1,333 | 1,33 | - |
| ທັງໝົດ | **195.000** | **1.000.205.000** | | **133.500** | **669.000.000** | | -31,54 | -33,11 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການຈັດກອງປະຊຸມ: ❶ ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ອຳນວຍການ ທຫລ ປະຈຳເດືອນ ມັງກອນ 2017, ❷ ກອງປະຊຸມປະກອບຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍລະບົບການຊຳລະສະສາງແຫ່ງຊາດ, ❸ ຈັດພິທີຮັບມະຫາຊົນກ້າວໜ້າເຂົ້າເປັນສະມາຊິກພັກສຳຮອງ ແລະ ເລື່ອນສະມາຊິກພັກສຳຮອງເປັນສະມາຊິກພັກສົມບູນຂອງ 5 ໜ່ວຍພັກ ທຫລ, ❹ ຈັດພິທີມອບໃບຍ້ອງຍໍໃຫ້ແກ່ທະນາຄານ ICBC ແລະ❺ ຈັດກອງປະຊຸມເພື່ອເຜີຍແຜ່ຄວາມຮູ້ພື້ນຖານກ່ຽວກັບການປະເມີນຄວາມສ່ຽງລະດັບຊາດໃນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- ສຳເລັດການເຂົ້າຮ່ວມກອງປະຊຸມທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ມັງກອນ 2017;
- ສຳເລັດການເຂົ້າຮ່ວມເຜີຍແຜ່ກ່ຽວກັບການນຳໃຊ້ຫຼັກການ plear;
- ສຳເລັດການປະກອບຄຳເຫັນຕໍ່ຮ່າງແຜນແມ່ບົດຊຸກຍູ້ການຮ່ວມມືກໍ່ສ້າງ'ໜຶ່ງແລວທາງໜຶ່ງເສັ້ນທາງ ລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານ ສປ ຈີນ ໄປຍັງກະຊວງແຜນການແລະການລົງທຶນ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ກະກຽມຄວາມພ້ອມໃນການຈັດກອງປະຊຸມສຳມະນາ ແລະ ພິທີຕ່າງໆ: ❶ ຈັດກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈຳເດືອນ ທັນວາ 2016, ❷ ກອງປະຊຸມແລກປ່ຽນບົດຮຽນວຽກງານຄຸ້ມຄອງສະຖາບັນການເງິນປະຈຳປີ ຢູ່ແຂວງຊຽງຂວາງ, ❸ ກອງປະຊຸມປຶກສາຫາລື ກ່ຽວກັບການປະເມີນພະນັກງານ ທຫລ ປະຈຳປີ 2016, ❹ ກອງປະຊຸມປຶກສາ

ຫາລືກ່ຽວກັບການປະເມີນຄວາມສ່ຽງລະດັບຊາດວຽກ AML, ❺ ກອງປະຊຸມສຳມະນາ ກ່ຽວກັບການລະບົບລາຍງານຂໍ້ມູນສິນເຊື່ອ CIB;

- ກະກຽມເຂົ້າຮ່ວມກອງປະຊຸມຕ່າງໆທີ່ຈັດໂດຍ ທຫລ ແລະ ພາກສ່ວນທາງນອກ: ❶ ເຂົ້າຮ່ວມກອງປະຊຸມຮ່າງດຳລັດຂອງຂໍ້ມູນຂ່າວສານສິນເຊື່ອ CIB, ❷ ກອງປະຊຸມເປີດກວ້າງວຽກງານກວດສອບ ປະຈຳປີ 2016;

- ກະກຽມຄວາມພ້ອມໃນການຮັບແຂກ ຜູ້ບໍລິຫານງານຄົນໃໝ່ຂອງທະນາຄານລາວ-ຝຣັ່ງ ແລະ ຕ້ອນຮັບຄະນະຊ່ຽວຊານ WB ວຽກງານປະເມີນຄວາມສ່ຽງລະດັບຊາດ;

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ